# ສູ່ຝັ່ງຝັນ



ໂດຍ: ດອກເຂັມແດງ

പി. ലാൽ

30.06.07

[illegible]

ນະວະນິຍາຍ

# ສູ່ຝັ່ງຝັນ

<u>ນະວະນິຍາຍ</u>

ສູ່ຝັ່ງຝັນ

ດອກເຂັມແດງ | ຊຽນ

ວັນໄມ | ພາບປົກແລະພາບປະກອບ

ວັດທະນາ ທອມສິມບັດ | ອອກແບບປົກ / ຮູບເຫຼັ້ມ

ພິມທີ່ ຫວັນໃຈ ການພິມ ຈຳນວນ: 1,000 ຫົວ

ຂະໜາດປຶ້ມ: 13 19 ຊມ$^{2}$ (ພິມຄັ້ງທຳອິດ)

ໃບທະບຽນພິມຈຳໜ່າຍເລກທີ 66 / ພຈ / 05

ສະຫງວນລິຂະສິດ

ລົງພິມເປັນຕອນທີ່ໜັງສືພິມລາຍວັນ ວຽງຈັນໃໝ່ (22/10/2003)

ລົງພິມເປັນຕອນທີ່ໜັງສືພິມລາຍອາທິດ ວັນອາທິດ (13/02/2004)

ຖ້າທ່ານໃດມີຄວາມສົນໃຈ, ກະລຸນາໂທເບີ: (020) 5695786

## ຄຳນຳຂອງທ່ານ ຈັນທີ ເດືອນສະຫວັນ ປະທານສະມາຄົມນັກປະພັນລາວ

ຄົນເຮົາທຸກຄົນເກີດມາ ຕ່າງກໍມີຄວາມຝັນ ຈາກຄວາມຝັນ ຈະກາຍເປັນຈິງໄດ້ ຖ້າຫາກຄົນຜູ້ນັ້ນ ຫາກມີຄວາມຕັ້ງໃຈຕໍ່ ໃນສິ່ງທີ່ຕົນໄດ້ຝັນ. ດັ່ງນາງພິນທອງ ໃນເລື່ອງ "ສູ່ຝັ່ງຝັນ" ທີ່ຂຽນໂດຍ ດອກເຂັມແດງ.

ພາຍຫຼັງປະເທດຊາດ ໄດ້ຮັບການປົດປ່ອຍຢ່າງສິ້ນເຊີງໃນເດືອນທັນວາ1975, ປະກາດປະເທດລາວ ເປັນປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສູນກາງພັກແລະລັດຖະບານ ໄດ້ເອົາແນວທາງການສຶກສາໄປກ່ອນກ້າວໜຶ່ງ ນັບແຕ່ບັດນັ້ນ ລະບົບການສຶກສາຂອງປະເທດເຮົາຄ່ອຍໆມີບາດກ້າວອັນໃໝ່ ນັບທັງເນື້ອໃນຫຼັກສູດການສອນ ກໍ່ໄດ້ປ່ຽນຈາກຕຳລາ ຂອງລ່າເມືອງຂຶ້ນມາເປັນຕຳລາການສຶກສາຂອງປະເທດທີ່ເປັນເອກະລາດ.

ແຕ່ທຸກສິ່ງທຸກຢ່າງ ກໍ່ບໍ່ແມ່ນເດີນແມ່ນແລ່ນສະດວກ ຕົກມາໄລຍະໜຶ່ງ ຍ້ອນວ່າລະບົບຄ່າຄອງຊີບຕົກຕ່ຳ ເງິນເດືອນຂອງລັດຖະກອນໜ້ອຍ ໂດຍສະເພາະຢ່າງຍິ່ງ ລະບົບເງິນເດືອນຂອງພວກທີ່ເປັນອາຈານ ເປັນຄູສອນ ບໍ່ສາມາດລ້ຽງກຸ້ມຕົນເອງ ແລະ ຄອບຄົວ ຍ້ອນແນວນັ້ນ ຖັນແຖວອາຈານ ແລະ ຄູສອນຈຶ່ງນັບມື້ຮົ່ວໄຫຼໄປດຳເນີນອາຊີບໃໝ່ນັກສຶກສາສ່ວນຫຼວງຫຼາຍທີ່ຈົບຈາກໂຮງຮຽນຊັ້ນຕ່າງໆ ພາກັນຫຼີກວິຊາຄູ.

ປຶ້ມເລື່ອງ "ສູ່ຝັ່ງຝັນ" ໄດ້ເປັນເລື່ອງທີ່ເປັນຢ້ຽມຢ່າງທີ່ດີແກ່ອາຈານ ແລະ ຄູທັງຫຼາຍໃນເລື່ອງຜູ້ຂຽນໄດ້ສ້າງຕົວລະຄອນ ທີ່ມີຊື່ວ່າ ນາງພິນທອງ ພາຍຫຼັງຈົບວິຊາຄູ ນາງກໍ່ໄດ້ຕະລຸມບອນ ໄປເປັນອາຈານສອນ ຢູ່ໃນຫ້ອງມ.6 ທີ່ທາງໂຮງຮຽນປະກອບຂຶ້ນໃໝ່ ສຳລັບນັກຮຽນອິເລເກນັ່ງພວກເສລີບີຮົ່ວ, ຢູ່ໃນຫ້ອງຮຽນເວລາໃດກໍເກີດບັນຫາກະທົບເຖິງ ຜູ້ເປັນອາຈານ ແລະ ຄູ, ແຕ່ຍ້ອນຄວາມໜັ້ງໝັ້ນໃນວິຊາຄູ ໃນທີ່ສຸດ ນາງພິນທອງ ກໍ່ສາມາດຜ່ານຜ່າ

ແລະ ເຮັດໃຫ້ຫ້ອງຮຽນດັ່ງກ່າວ ກັບກາຍເປັນຫ້ອງຮຽນ ທີ່ມີລະບຽບ ແລະ ຮັກຫອມກັນ ນັກຮຽນທຸກຄົນ ລ້ວນແຕ່ສອບເສັງໄດ້ຄະແນນດີ, ນັກຮຽນທຸກຄົນມີຄວາມເຄົາລົບຢຳເກງອາຈານ ຊຶ່ງໃນເມື່ອກ່ອນ ພວກເຂົາຖືເບົາ ເຢັນຊາ.

ເລື່ອງນີ້ ເຕືອນໃຈໃຫ້ຜູ້ເປັນຄູ ມີຄວາມຕັ້ງໝັ້ນໃນຄວາມເປັນຄູ ເຊື່ອໝັ້ນຕໍ່ການນຳ ແລະ ຂອງໝູ່ຄະນະ ຄວາມຝັນຂອງນາງໄດ້ກັບກາຍເປັນຄວາມຈິງ.

ປະທານສະມາຄົມນັກປະພັນລາວ

ຈັນທີ ເດືອນສະຫວັນ

ກັນຍາ ພ.ສ 2548. ນະຄອນຫຼວງວຽງຈັນ

## ຄຳນຳຜູ້ຂຽນ "ສູ່ຝັ່ງຝັນ"

ຊີວິດຂອງຄົນເຮົານັ້ນ ມັກຈະມີຄວາມໄຝ່ຝັນເປັນຂອງຕົນເອງຢູ່ຫຼາຍເລື່ອງ ທັ້ງທີ່ບໍ່ຮູ້ວ່າ ຄວາມໄຝ່ຝັນເຫຼົ່ານັ້ນຈະກາຍເປັນຄວາມຈິງໄດ້ຫຼືບໍ່ ແຕ່ສິ່ງໜຶ່ງທີ່ຄວາມຝັນໄດ້ໃຫ້ແກ່ຄົນເຮົາ ກໍ່ຄືຄວາມສຸກໃຈ ເພາະທຸກສິ່ງທຸກຢ່າງເປັນໄປໄດ້ໃນຄວາມຝັນ ເຮົາສາມາດມອງເຫັນພາບທີ່ມີແຕ່ຮອຍຍິ້ມຂອງຄວາມສົມຫວັງ ການໃຫ້ອະໄພ ຄວາມຮັກແພງ ຄວາມໂອບອ້ອມອາລີ ຄວາມເມດຕາກະລຸນາ ການມອບໃຫ້ ແລະ ການຮັບເອົາທີ່ສົມດູນກັນ ຊຶ່ງຄວາມຈິງແລ້ວສິ່ງເຫຼົ່ານັ້ນກໍ່ບໍ່ໄດ້ໄກເກີນເອື້ອມ ຖ້າເຮົາມຸ່ງໝັ້ນ ທີ່ຈະໄປໃຫ້ເຖິງ.

ຂ້າພະເຈົ້າເຊື່ອໝັ້ນວ່າ ເຖິງພວກເຮົາຈະຢູ່ໃນຍຸກສະໄໝທີ່ສັງຄົມມີຄວາມກ້າວໜ້າທັນສະໄໝພຽງໃດກໍ່ຕາມ ແຕ່ທຸກທ່ານ ຄົງຈະປາດຖະໜາຢາກໃຫ້ຮອຍຍິ້ມ ແລະ ຄວາມຮູ້ສຶກທີ່ດີງາມມີຢູ່ທົ່ວໄປ ເພື່ອໃຫ້ສັງຄົມຂອງພວກເຮົາໜ້າຢູ່ຍິ່ງໆຂຶ້ນ.

ໂປຣດຢ່າລືມວ່າ ທ່ານກໍເປັນຄົນໜຶ່ງທີ່ສາມາດຈະມອບຄວາມຮູ້ສຶກດີໆນັ້ນ ໃຫ້ແກ່ທຸກຄົນທີ່ຢູ່ອ້ອມຮອບຕົວທ່ານ ເພື່ອໃຫ້ມີກຳລັງໃຈກ້າວຂ້າມສາຍນະທີອັນກວ້າງໄກຂອງຄວາມຝັນໄປ "ສູ່ຝັ່ງຝັນ" ໄດ້ສຳເລັດຜົນ.

ຂໍທຸກທ່ານຈົ່ງມີສຸຂະພາບແຂງແຮງ ມີຄວາມສຸກ ແລະ ສົມຫວັງໃນທຸກສິ່ງທີ່ປາດຖະໜາ.

ຂໍຂອບໃຈທຸກທ່ານທີ່ໃຫ້ກຳລັງໃຈ

ດອກເຂັມແດງ

ກັນຍາ ພ.ສ 2548, ນະຄອນຫຼວງວຽງຈັນ

24/VII
ຫາມຈຳໜ່າຍ

ຄຳຂອບໃຈ ຈາກຜູ້ຂຽນ

ຂໍສະແດງຄວາມຮູ້ບຸນຄຸນ ແລະ ລະລຶກເຖິງ ມື້ລາງ ທ່ານສີຊະນະ ສີສານ ທີ່ໄດ້ປະດິດແຕ່ງເພງ ແດນແຫ່ງອິດສະຫຼະໄວ້ແກ່ຊົນຮຸ່ນຫຼັງ ເຊິ່ງຂ້າພະເຈົ້າ ໄດ້ນຳເອົາບົດເພງສ່ວນໜຶ່ງ ມາປະກອບເຂົ້າໃສ່ບົດ ເລື່ອງ "ສູ່ຝັ່ງຝັນ" ຂໍຂອບໃຈມາຍັງ ທ່ານ ຈັນທີ ເດືອນສະຫວັນ ປະທານສະມາຄົມນັກປະພັນລາວ ທີ່ໃຫ້ກຽດຂຽນຄຳນຳ ເຮັດໃຫ້ປຶ້ມ ເຫຼັ້ມນີ້ມີຄຸນຄ່າຍິ່ງຂຶ້ນ ຂໍຂອບໃຈຄະນະບັນນາທິການໜັງສືພິມວຽງ ຈັນໃໝ່ ແລະ ໜັງສືພິມວັນອາທິດທີ່ໃຫ້ໂອກາດແກ່ "ສູ່ຝັ່ງຝັນ" ໄດ້ ມີເວທີສຳລັບເຜີຍແຜ່ສູ່ຜູ້ອ່ານ ຂໍຂອບໃຈ ໂອທອງ ຄຳອິນຊູ ທີ່ຊ່ວຍ ບັນນາທິການໃຫ້ເປັນຄົນທຳອິດ ຂໍຂອບໃຈບັນດາຍາດມິດເພື່ອນສະ ຫາຍ ຊຶ່ງເຮັດໜ້າທີ່ດັ່ງກອງບັນນາທິການສ່ວນຕົວຂອງຂ້າພະເຈົ້າ ຊ່ວຍສະຫຼະເວລາອັນມີຄ່າມາອ່ານ ວິຈານ ຕິຊົມ ນັບທັງກຳລັງໃຈ ແລະ ຄວາມຊ່ວຍເຫຼືອທີ່ໄດ້ຮັບຈາກໝູ່ເພື່ອນທຸກຄົນຊຶ່ງຂ້າພະເຈົ້າບໍ່ ສາມາດເອີ້ຍນາມໄດ້ໝົດໃນທີ່ນີ້.

# ເລື່ອງຫຍໍ້ "ສູ່ຝັ່ງຝັນ"

ໂດຍ: ດອກເຂັມແດງ

ພິນທອງ ນິສິດສາວຈາກຮົ້ວມະຫາວິທະຍາໄລ ຜູ້ມີຈິດໃຈດີງາມ ແລະ ປາດຖະໜາຢາກຖ່າຍທອດ ຄວາມຮູ້ແກ່ຜູ້ອື່ນ ນາງໄດ້ຕັດສິນໃຈສະໝັກເຂົ້າສອນຢູ່ໂຮງຮຽນນ້ອຍແຫ່ງໜຶ່ງ ນະແຫ່ງນັ້ນ ນາງຕ້ອງໄດ້ພົບພໍ້ກັບເພື່ອນຮ່ວມງານ ແລະ ເດັກນັກຮຽນທີ່ລ້ວນແຕ່ກໍ່ບັນຫາຫຍຸ້ງຍາກແກ່ແນວຄິດຈິດໃຈຂອງນາງ ແຕ່ຍ້ອນອຸດົມການ ແລະ ຄວາມມຸ່ງໝັ້ນທີ່ຈະໄປໃຫ້ເຖິງຄວາມຝັນ ນາງໄດ້ໃຊ້ສະຕິປັນຍາ ແລະ ຄວາມອົດທົນ ເພື່ອຜ່ານຜ່າຕໍ່ອຸປະສັກເຫຼົ່ານັ້ນ ດ້ວຍທັດສະນະຄະຕິທີ່ວ່າ "ສ້າງຄົນດີ ເພື່ອເປັນຄົນເກັ່ງ"



## 1

**ພິນທອງ ຈັບປົກກາບແຂງ** ທີ່ຫໍ່ຫຸ້ມດ້ວຍແຜ່ນຢາງພິເສດສີແດງຊ້ຳທີ່ອັດພິມໂຕໜັງສືສີຄຳວ່າ: "ໃບປະກາດສະນີຍະບັດ" ແຍງໄປແຍງມາຢ່າງພາກພູມໃຈ ນາງເປີດເບິ່ງຂ້າງໃນ ທີ່ພິມດ້ານຊ້າຍ ເປັນພາສາອັງກິດ ແລະດ້ານຂວາເປັນພາສາລາວລະບຸຊື່ນາມສະກຸນ ແລະ ຄຸນນະວຸດທິການສຶກສາເປັນໂຕໜັງສື ທີ່ງາມມີລະບຽບສິ່ງນີ້ລະທີ່ນາງໄຝ່ຝັນຫາ ແລະ ຢາກເປັນເຈົ້າຂອງ ມາຕັ້ງແຕ່ດົນມື້ນີ້ໃບປະກາດແຜ່ນນີ້ ໄດ້ມາຢູ່ໃນກຳມືຂອງນາງແລ້ວ.

ພາບບັນຍາກາດ ຂອງການຮັບໃບປະກາດຈົບຊັ້ນປະລິນຍາຕີທີ່ຈັດຢູ່ ຄະນະເສດຖະສາດ ວິທະຍາເຂດດົງໂດກປະກົດຂຶ້ນ ໃນຫ້ວງຄວາມຊົງຈຳນັກສຶກສາກວ່າພັນຄົນ ຍ່າງຂວັກໄຂວ່ ໄປມາ ໃບໜ້າອາບໄປດ້ວຍຮອຍຍິ້ມຜູ້ປົກຄອງ ແລະ ໝູ່ເພື່ອນທີ່ ມາຮ່ວມສະແດງຄວາມຊົມ

ຊື່ນຍິນດີຕ່າງກໍມີຊໍ່ດອກໄມ້ງາມໆ ເພື່ອມາມອບໃຫ້ແທນຂອງຂວັນ ພິນທອງກ້າວຂາຢ່າງໝັ້ນຄົງ ແມ່ນວ່າໃຈຂອງນາງ ຢາກສັ່ນໆວາດໜຶ່ງ ແຕ່ໃນທີ່ສຸດ ນາງກໍກ້າວໄປຢຸດຢືນ ຢູ່ຕໍ່ໜ້າ ທ່ານ ນາຍົກລັດຖະມົນຕີທີ່ໃຫ້ກຽດມາມອບ ໃບປະກາດໃນມື້ນັ້ນນາງຍື່ນມືໄປຮັບເອົາຕໍ່ມືຂອງເພິ່ນທ່າມກາງແສງຕາຂອງແຂກຜູ້ມີກຽດນັບຮ້ອຍໆທ່ານ.

"ຊົມເຊີຍເດີພິນ ດີໃຈນຳທີ່ຮຽນຈົບແລ້ວ"

ສຸລິຍາເພື່ອນເກົ່າທີ່ຮຽນມານຳກັນແຕ່ຊັ້ນມັດທະຍົມແຕ່ເຂົາແຍກສາຍ ໄປຮຽນວິຊາເລກຄອມພິວເຕີ ແລະຈົບກ່ອນນາງປີໜຶ່ງ ມອບຊໍ່ດອກກຸຫຼາບສົດສີແດງ ຊໍ່ໃຫຍ່.

"ຂອບໃຈ ຍາ ໂຮ! ແຕ່ກວ່າຈະຈົບໄດ້ ກໍເກືອບຕາຍວ່າບໍ?"

"ເອີ້າ! ແນວວ່າເພິ່ນລະເອົາແທ້ເອົາວ່າເປັນນັກຮຽນເກັ່ງຕະຫຼອດ ກໍຕ້ອງທຸ່ມເທ ສຸດຊີວິດພຸ້ນລະ" ສຸລິຍາເວົ້າຢອກໆ.

ຄອບຄົວ ທີ່ຢືນເປັນກຸ່ມຢູ່ໃກ້ໆ ຫຼຽວມາເບິ່ງ ແມ່ກວັກມື ເອົາສອງໜຸ່ມສາວ.

"ພິນທອງ ສຸລິຍາມາຖ່າຍຮູບຮ່ວມກັນພີ່ກ່ອນລູກ"

"ນີ້ແມ່ນ ນາງພິນທອງ ລູກສາວ ແລະ ນີ້ກໍ ພໍ່ວິຈິດ ເພິ່ນເປັນໝູ່ພໍ່ລູກຊາຍເພິ່ນ ກໍຮຽນຈົບປີນີ້ຄືກັນ"

"ສະບາຍດີ ພໍ່ ວິຈິດ"

ນາງຍໍມືນົບເພິ່ນແລະຍິ້ມຢ່າງອ່ອນຫວານເມື່ອເພິ່ນຖາມວ່າ

"ລູກຮຽນຈົບຄະນະໃດ?"

"ຄະນະ ສຶກສາສາດ ຂ້ານ້ອຍຮຽນເພື່ອມາເປັນຄູ ໂດຍສະເພາະ" ພິນທອງຕອບຢ່າງພາກພູມໃຈ

"ຣະ! ຮຽນເປັນຄູເບາະ ລູກຄືບໍ່ຊອກຮຽນວິຊາອື່ນ? ຫຼືວ່າຕັ້ງມັກອາຊີບນີ້ເບາະ"

"ໂດຍ! ຂ້ານ້ອຍມັກຫຼາຍ ທັງຄິດໄວ້ໃນໃຈ ຕັ້ງແຕ່ຍັງຮຽນປະຖົມພຸ້ນວ່າ ຈະເລືອກຮຽນວິຊາ ທີ່ຕົນເອງມັກ ຈະນຳໃຊ້ ໃນວຽກງານໄດ້ດີກວ່າ"

"ຕອນຍັງນ້ອຍ ນາງພິນທອງ ມັກເອົາເກີບຢ່ອງແມ່ມາໃສ່ເອົາແວ່ນຕາເກົ່າບໍ່ມີແວ່ນຂອງປູ່ມາສວມແລ້ວກໍຖືໄມ້ແສ້ ຈັບເອົາພີ່ນ້ອງໂຕສໍ່າກັນ ມານັ່ງສະລອນ ເປັນລູກສິດສ່ວນໂຕເອງກໍ ເປັນນາຍຄູຕະຫຼອດເລີຍໃດ໋"

ເມື່ອແມ່ເລົ່າເລື່ອງອະດີດໃຫ້ໄດ້ຍິນເທື່ອໃດພິນທອງຕ້ອງໜ້າແດງຍ້ອນຄວາມອາຍທຸກເທື່ອໄລດ

"ແມ່ຈັກເວົ້າຫຍັງບຸລູກກໍອາຍເປັນໃດ໋ນີ້" ພີ່ນ້ອງທີ່ຢູ່ທີ່ນັ້ນ ກໍພາກັນຫົວຂຶ້ນ ແລະ ໃນໃຈກໍວາດພາບ ເຫັນເດັກຍິງ ພິນທອງ ໃສ່ເກີບສົ້ນຢ່ອງ ຖືໄມ້ແສ້ ຊີ້ໃສ່ກະດານແລະ ສວມແວ່ນຕາບໍ່ມີແກ້ວ ເວົ້າແຈ້ວໆ ສອນ ກໍ ອາກາ ໃຫ້ຄືນ ສໍ່າດຽວກັນ ຄືງເປັນພາບ ທີ່ໜ້າເບິ່ງບໍ່ໜ້ອຍ

"ອາດຈະເປັນຍ້ອນ ສາຍເລືອດ ກໍເປັນໄດ້ໃດ໋ເນາະປູ່ມື້ລາງລາວກໍເປັນ ຄູເດ"

ໝູ່ຂອງພໍ່ ໃຫ້ຄວາມເຫັນ ພໍ່ຂອງພິນທອງ ງຶກຫົວເຫັນດີ

"ອາດເປັນໄປໄດ້ ພິນທອງ ເປັນຫຼານຮັກຂອງປູ່ຢູ່ແລ້ວ ແລະ ລູກຫຼານຄົນອື່ນໆ ກໍບໍ່ມີແວວວ່າຈະເປັນຜູ້ສືບທອດພໍ່ຄົນ"

ເພິ່ນເວົ້າທັງຍິ້ມຢ່າງພູມໃຈ ແລະ ແນມນຳລູກສາວທີ່ຢູ່ທ່າມກາງໝູ່ເພື່ອນຢ່າງສຸກໃຈ

"ວ່າຈັ່ງໃດ ເພິ່ນຕົກລົງເປັນຄູແທ້ບໍ່ລະນິ?" ສຸລິຍາເອີ່ຍຖາມຈິງຈັງ

"ແມ່ນອນ ແຕ່ບໍ່ແມ່ນບ່ອນລົງຝຶກຫັດໃດ໋ລະ! ເຂົາຈະສອນຢູ່ໃນຕົວເມືອງ ວຽງຈັນນີ້ລະ ເລີ່ມຕົ້ນ ມ. ປາຍ"

"ຫ໋າ! ຊິສອນຫ້ອງ ມ.ປາຍ ເບາະ ເດັກນ້ອຍ ສ່ຳນີ້ກຳລັງບອກຍາກ"

"ເອີນ໋າ ເຂົາໄປສະມັກໄວ້ແລ້ວເດ"

"ຢູ່ໂຮງຮຽນໃດ ເອກະຊົນເບາະ?"

"ບໍ່ແມ່ນເອກະຊົນ ເປັນຂອງລັດຖະບານເປັນໂຮງຮຽນນ້ອຍໆບໍ່ຄ່ອຍມີໃຜເວົ້າເຖິງມີແຕ່ ມ.ຕົ້ນ ຫາ ມ.ປາຍເທົ່ານັ້ນ"

"ຮື້! ແຕ່ວ່າ ເງິນເດືອນລັດນີ້ໜ້ອຍແທ້ໃດ ຮອດບໍ້ ສອງແສນຕອນເຂົ້າໃໝ່ນີ້"

"ຍັງບໍ່ຮູ້ເທື່ອ ກະຊິໄດ້ຂໍອາໃສເປັນຊາວເກາະຂໍກິນ ນຳ ພໍ່ແມ່ໄປກ່ອນທີ່ເຂົາເລືອກໂຮງຮຽນນີ້ເພາະວ່າອຳນວຍ ການໂຮງຮຽນເປັນຜູ່ຍິງ ແລະ ກໍຍິນດີຮັບເອົາເຂົາງ່າຍໆ ບໍ່ໄດ້ເວົ້າວ່າເຈົ້າຫາກໍຈົບໃໝ່ ເລີ່ມຕົ້ນກໍສັນຍາຈ້າງ ເຮັດ ເອົາປະສົບການໄປກ່ອນ"

"ຖ້າມີຫຍັງໃຫ້ເຂົາຊ່ວຍ ບອກເດີ້ ສຳລັບເພິ່ນ ເຂົາ ຫວ່າງສະເໝີ"

"ອ້າວ... ແລ້ວເພິ່ນບໍ່ຄາວຽກເບາະ ຄືວ່າມີທຸລະກິດ ສ່ວນຕົວແລ້ວ ແມ່ນເຮັດຫຍັງແດ່?"

"ເຮັດກ່ຽວກັບ ຄອມພິວເຕີ ສ້າງໂປຼແກຼມ ຮັບແປງ ຮາດແວ ແລະ ດຽວນີ້ມີແນວຄິດໃໝ່ ກຳລັງຄົ້ນຄວ້າ ສູດຄິດໄລ່ ທີ່ງ່າຍດາຍ ສຳລັບນັກຮຽນລຸ້ນໃໝ່ຢູ່"

"ໂຮ! ດີແລ້ວເດ ຂອບໃຈລ່ວງໜ້າ ຖ້າມີບັນຫາ ຫຍັງເພິ່ນເປັນຄົນທຳອິດທີ່ເຂົາຈະຂໍຄວາມຊ່ວຍເຫຼືອ"

"ເວົ້າແທ້ໄດ໋ຢ່າລືມຄຳນີ້ເດີ້"

ສຸລິຍາເວົ້າດ້ວຍນ້ຳສຽງອ່ອນຫວານ ແຕ່ໜັກແໜ້ນ ຄວາມສຳພັນຖານໝູ່ເພື່ອນແຕ່ຍັງນ້ອຍມາຈົນຕ່າງຄົນຕ່າງ ຮຽນຈົບຖ້າຫາກເກີດຄວາມຮູ້ສຶກລຶກຊຶ້ງ ເກີນກວ່ານັ້ນມັນ ກໍຄົງບໍ່ແປກ ແຕ່ທ່າທີຂອງ ພິນທອງ ທີ່ສະແດງຕໍ່ເຂົາ ໃນຖານະເພື່ອນຜູ່ໃກ້ຊິດກວ່າຄົນອື່ນໆກໍຍັງເປັນແບບນັ້ນຄື ເກົ່າ ສຸລິຍາຮູ້ໃຈ ຂອງເຂົາເອງດີວ່າ ມັນບໍ່ຢາກຖືພິນທອງ ເປັນພຽງໝູ່ກັນປານໃດແລ້ວ

"ມື້ໜ້າ ເຂົາຊິໄປຫາຢູ່ເຮືອນເດີ ມີຂອງຂວັນພິ ເສດຈະໃຫ້"

"ແມ່ນຫຍັງລະ?"

"ບໍ່ບອກເທື່ອ ຈັກໜ້ອຍບໍ່ຕື່ນເຕັ້ນ"

"ເອີ້! ເວົ້ານຳພວກໂປ່ແຖຼມເນີນີ້ ຂີ້ຄ້ານເວົ້າລະ ນຳ ບໍ່ທັນ!"

ພິນທອງເວົ້າສົງອນໆ ແຕ່ສຸລິຍາກໍລັກແຍງກິລິຍາ ແບບນີ້ເຂົາຄິດວ່າ ເປັນຜູ້ຍິງຕ້ອງມີການງອນແດ່ ເຖິງຫຼັບ

ຕາຊັງກໍໜ້າຮັກ ຄືຄົນທັງຫຼາຍວ່ານັ້ນລະ ຖືກຜູ້ມັກເຮັດຫຍັງກໍດີໝົດທຸກຢ່າງ ແລະ ເຂົາເອງກໍພ້ອມສະເໝີ ທີ່ຈະເຮັດທຸກສິ່ງຢ່າງເພື່ອ ໃຫ້ນາງເຫັນຄວາມດີ ແລະ ເຂົ້າໃຈວ່າເຂົາຄິດແນວໃດແທນການສາລະພາບກົງໆ.



# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ